ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ກອງປະຊຸມສະພາບໍລິຫານ ທຫລ ຮັບຮອງເອົາ 4 ວຽກສຳຄັນ





ກອງປະຊຸມສະພາບໍລິຫານທະນາຄານແຫ່ງ ສປປ ລາວ (ທຫລ) ຄັ້ງທີ I ປະຈຳປີ 2020 ໄດ້ສຳເລັດລົງດ້ວຍໝາກຜົນອັນຈົບງາມ ໃນວັນທີ 16 ພະຈິກ 2020 ທີ່ຫ້ອງປະຊຸມ ທຫລ, ນະຄອນຫຼວງວຽງຈັນ ໂດຍການໃຫ້ກຽດເປັນປະທານຂອງທ່ານ ສອນໄຊ ສິດພະໄຊ ຜູ້ວ່າການ ທຫລ, ປະທານສະພາບໍລິຫານ ທຫລ; ພ້ອມນີ້, ກໍ່ມີການເຂົ້າຮ່ວມຂອງຮອງປະທານ-ຄະນະກຳມະການສະພາບໍລິຫານ ແລະ ບັນດາກົມ/ຫ້ອງການທີ່ກ່ຽວຂ້ອງຂອງ ທຫລ ຊຶ່ງເປັນກອງປະຊຸມຄັ້ງປະຖົມມະລຶກຂອງສະພາບໍລິຫານຊຸດໃໝ່ພາຍຫຼັງທີ່ປະກາດການຈັດຕັ້ງສະພາບໍລິຫານ ທຫລ ໃນກາງເດືອນມິຖຸນາ 2020 ກໍ່ຄືເປັນການຈັດຕັ້ງຜັນຂະຫຍາຍຜົນສຳເລັດຂອງກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກ ທຫລ ຄັ້ງທີ IV.

ກອງປະຊຸມສະພາບໍລິຫານໃນຄັ້ງນີ້ ແມ່ນປະຕິບັດຕາມລະບອບການປະຊຸມຂອງສະພາບໍລິຫານ ທຫລ ທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍ ທຫລ (ສະບັບປັບປຸງ) ເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018 ໂດຍໄດ້ຮັບຟັງການລາຍງານການເຄື່ອນໄຫວວຽກງານຂອງ ທຫລ ໄລຍະຜ່ານມາ ແລະ ທິດທາງແຜນການທ້າຍປີ 2020; ສະຫຼຸບການປະຕິບັດແຜນເງິນຕາໃນໄລຍະ 10 ເດືອນປີ 2020, ທິດທາງແຜນການເຄື່ອນໄຫວຮອດທ້າຍປີ 2020 ແລະ ແຜນການປີ 2021; ບົດລາຍງານຜົນການຈັດຕັ້ງປະຕິບັດແຜນງົບປະມານ 9 ເດືອນ, ຄາດຄະເນປະຕິບັດໝົດປີ ແລະ ການດັດແກ້ແຜນງົບປະມານປີ 2020 ຂອງ ທຫລ ແລະ ວຽກງານອື່ນໆ ທີ່ຕິດພັນ; ພ້ອມກັນນັ້ນ, ບັນດາກຳມະການສະພາບໍລິຫານ ທຫລ ຍັງໄດ້ມີການຄົ້ນຄ້ວາ ແລະ ປະກອບຄຳເຫັນລົງເລິກວຽກງານຄຸ້ມຄອງມະຫາພາກເງິນຕາໂດຍສະເພາະແມ່ນການກຳນົດຄາດໝາຍແຜນເງິນຕາ; ການຄຸ້ມຄອງປະລິມານເງິນ; ການຄຸ້ມຄອງຮ້ານແລກປ່ຽນເງິນຕາ; ການປັບປຸງທະນາຄານທຸລະກິດລັດເຫຼົ່ານີ້ເປັນຕົ້ນ ທັງນີ້ກໍ່ເພື່ອເຮັດໃຫ້ແຜນດຳເນີນງານໃນຕໍ່ໜ້າບັນລຸຜົນດີກ່ວາເກົ່າ.

ທ່ານຜູ້ວ່າການ ທຫລ, ປະທານສະພາບໍລິຫານ ທຫລ ໄດ້ເນັ້ນໜັກວ່າ: ໃນປີ 2020 ຕ້ອງສຸມໃສ່ຈັດຕັ້ງປະຕິບັດມາດຕະການຄວບຄຸມ ແລະ ນະໂຍບາຍຕ່າງໆ ເພື່ອແກ້ໄຂຜົນກະທົບຈາກການລະບາດຂອງພະຍາດ COVID-19. ພ້ອມນີ້, ກໍ່ສືບຕໍ່ເອົາໃຈໃສ່ຮັກສາສະຖຽນລະພາບເງິນຕາແຫ່ງຊາດຕາມຄາດໝາຍຕົວເລກມະຫາພາກເງິນຕາ ທີ່ທາງສະພາແຫ່ງຊາດ ໄດ້ຮັບຮອງເປັນຕົ້ນການຄຸ້ມຄອງອັດຕາແລກປ່ຽນຕາມຂອບທີ່ກຳນົດໄວ້; ຄວບຄຸມປະລິມານເງິນ M2; ລະດັບຄັງສຳຮອງເງິນຕາຕ່າງປະເທດ ແລະ ຄຸ້ມຄອງໜີ້ສິນຂອງທະນາຄານທຸລະກິດ ແລະ ຄຸ້ມຄອງສະຖາບັນການເງິນ, ປັບປຸງລະບົບທະນາຄານໃຫ້ມີຄວາມໜັກແໜ້ນເຂັ້ມແຂງ, ຊຸກຍູ້ທະນາຄານທຸລະກິດສະໜອງທຶນເພື່ອສົ່ງເສີມ SME ແລະ ທຫລ ສືບຕໍ່ເອົາໃຈໃສ່ຈັດຕັ້ງປະຕິບັດແຜນງົບປະມານຕາມແຜນທີ່ສະພາບໍລິຫານ ທຫລ ຮັບຮອງ ແລະ ພ້ອມທັງຈັດຕັ້ງປະຕິບັດການເຄື່ອນໄຫວຂອງວຽກງານ ທຫລ ໃຫ້ໄດ້ຮັບຜົນເປັນຢ່າງດີ.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**

**ເສດຖະກິດລາວຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງນຳໃຊ້ເງິນກີບ**